ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ 2682 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 28 ກໍລະກົດ 2026

# ແຈ້ງການ

ເຖິງ: ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ.

ເລື່ອງ: ໂຈະການນຳເຂົ້າ ແລະ ຈຳໜ່າຍ ເຄື່ອງຫຼິ້ນປະເພດ ສະກວິດຊີ (Squishy).

- ອີງຕາມ ກົດໝາຍ ວ່າດ້ວຍການປົກປ້ອງຜູ້ຊົມໃຊ້ ສະບັບເລກທີ 02/ສພຊ, ລົງວັນທີ 30 ມິຖຸນາ 2010;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ, ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1990/ອຄ, ລົງວັນທີ 09 ກັນຍາ 2025;
- ອີງຕາມ ການຮ້ອງທຸກຈາກຜູ້ຊົມໃຊ້ ຜ່ານສາຍດ່ວນ 1510 ໃນຄັ້ງວັນທີ 21 ກໍລະກົດ 2025 ກ່ຽວກັບຜົນກະທົບ ຂອງຜະລິດຕະພັນ ສະກວິດຊີ (Squishy) ຕໍ່ຜູ້ຊົມໃຊ້ ໂດຍສະເພາະກຸ່ມເດັກນ້ອຍ;
- ອີງຕາມ ຂໍ້ມູນການກວດກາ ແລະ ເຝົ້າລະວັງຄວາມປອດໄພຂອງສິນຄ້າອຸປະໂພກ-ບໍລິໂພກ ໃນທ້ອງຕະຫຼາດ.

ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ຜ່ານການຕິດຕາມ ແລະ ກວດກາຄວາມປອດໄພຂອງສິນຄ້າປະເພດເຄື່ອງຫຼິ້ນ, ເນື່ອງຈາກວ່າໃນປະຈຸບັນ ພົບເຫັນວ່າເຄື່ອງຫຼິ້ນບີບອັດ ຫຼື ທີ່ຮູ້ຈັກກັນໃນຊື່: ສະກວິດຊີ "Squishy" ທີ່ນຳເຂົ້າຈາກຕ່າງປະເທດແມ່ນພົບວ່າມີສິ່ງປົນເປື້ອນ ແລະ ມີຄວາມສ່ຽງດ້ານສານເຄມີໃນລະດັບຮ້າຍແຮງ ຊຶ່ງສົ່ງຜົນກະທົບໂດຍກົງຕໍ່ສຸຂະພາບ ແລະ ຄວາມປອດໄພຂອງຜູ້ຊົມໃຊ້ ໂດຍສະເພາະແມ່ນກຸ່ມເດັກນ້ອຍ.

ສະນັ້ນ, ເພື່ອເປັນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ຊົມໃຊ້ ກໍຄືປ້ອງກັນຜົນກະທົບຕໍ່ສຸຂະພາບທີ່ອາດຈະເກີດຂຶ້ນ, ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ, ຈຶ່ງອອກແຈ້ງການ ແລະ ມອບໝາຍໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ ເອົາໃຈໃສ່ຈັດຕັ້ງປະຕິບັດ ດັ່ງນີ້:

1. ແຈ້ງໃຫ້ບັນດາຫົວໜ່ວຍທຸລະກິດ, ຜູ້ປະກອບການ, ຜູ້ນຳເຂົ້າ, ຜູ້ຂາຍສົ່ງ ແລະ ຂາຍຍ່ອຍ ໂຈະການນຳເຂົ້າ ແລະ ຈຳໜ່າຍ ເຄື່ອງຫຼິ້ນປະເພດສະກວິດຊີ (Squishy) ທີ່ບໍ່ໄດ້ມາດຕະຖານ ແລະ ບໍ່ມີການຢັ້ງຢືນຮັບຮອງຄວາມປອດໄພທຸກຮູບແບບ ໃນຂອບເຂດທົ່ວປະເທດ;
2. ໃຫ້ແຈ້ງເຕືອນໄພອັນຕະລາຍຈາກສານເຄມີ, ເນື່ອງຈາກວ່າ ການກວດສອບພົບວ່າຊັ້ນນອກຂອງເຄື່ອງຫຼິ້ນດັ່ງກ່າວມີສານເບນຊີນ (Benzene) ຕົກຄ້າງໃນປະລິມານທີ່ສູງເກີນຄ່າມາດຕະຖານທີ່ກຳນົດ. ສານເຄມີດັ່ງກ່າວ ເປັນອັນຕະລາຍຮ້າຍແຮງ ເຊິ່ງຈະກໍ່ໃຫ້ເກີດອາການລະຄາຍເຄືອງຕໍ່ດວງຕາ, ດັງ, ລຳຄໍ, ຊຶ່ງນຳໄປສູ່ອາການແພ້ຕ່າງໆ ແລະ ໃນໄລຍະຍາວອາດເປັນສາເຫດກໍ່ໃຫ້ເກີດພະຍາດມະເຮັງບາງຊະນິດ ໂດຍສະເພາະແມ່ນມະເຮັງເມັດເລືອດຂາວ;
3. ໃຫ້ແຕ່ງຕັ້ງເຈົ້າໜ້າທີ່ປົກປ້ອງຜູ້ຊົມໃຊ້ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງພາຍໃນແຂວງຂອງຕົນ ເຊັ່ນ: ສາທາລະນະສຸກ, ຕຳຫຼວດເສດຖະກິດ, ອຳນາດການປົກຄອງທ້ອງຖິ່ນ ແລະ ບໍລິສັດ ນຳເຂົ້າ ແລະ ສົ່ງອອກ ເພື່ອລົງຕິດຕາມ, ກວດກາ ຕາມຮ້ານ ຂາຍເຄື່ອງຫຼິ້ນ, ຕະຫຼາດ, ຊຸບເປີມາເກັດ, ສູນການຄ້າ ແລະ ຊ່ອງທາງການຂາຍອອນ



ສະແກນດ້ວຍ CamScanner

ລາຍຕ່າງໆ. ຖ້າຫາກພົບເຫັນການລະເມີດ ໃຫ້ນໍາໃຊ້ມາດຕະການກ່າວເຕືອນ, ຢຶດ, ອາຍັດ ຫຼື ທໍາລາຍສິນຄ້າດັ່ງກ່າວຖິ້ມ ແລະ ປັບໃໝຕາມລະບຽບກົດໝາຍຢ່າງເຂັ້ມງວດ;

4. ໃຫ້ຮີບຮ້ອນອອກແຈ້ງການເຕືອນໄພ ຜ່ານສື່ມວນຊົນ ແລະ ຊ່ອງທາງຕ່າງໆ ລວມເຖິງສາຍດ່ວນ 1510, ເຟດບຸກ ສະມາຄົມປົກປ້ອງຜູ້ຊົມໃຊ້, ເພື່ອໃຫ້ພໍ່ແມ່ຜູ້ປົກຄອງ ແລະ ຜູ້ຊົມໃຊ້ ທົ່ວສັງຄົມ ໄດ້ຮັບຊາບເຖິງໄພອັນຕະລາຍຂອງເຄື່ອງຫຼິ້ນປະເພດນີ້ ແລະ ຫຼີກລ້ຽງການຊື້ໃຫ້ເດັກນ້ອຍຫຼິ້ນຢ່າງເດັດຂາດ;
5. ໃຫ້ສະຫລຸບ-ລາຍງານຜົນການຈັດຕັ້ງປະຕິບັດ ມາຍັງ ກົມການຄ້າພາຍໃນ, ກະຊວງອຸດສາຫະກໍາ ແລະ ການຄ້າ ຊາບເປັນແຕ່ລະໄລຍະ;
6. ແຈ້ງການສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຫົວໜ້າຫ້ອງການ

ປອ. ບົວວັນ ວິລະວົງ

ຕົວຢ່າງຮູບພາບ



ສະແກນດ້ວຍ CamScanner